ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=== 000 ===-----

ຄະນະກໍາມະການຄຸ້ມຄອງຫຼັກຊັບ

ເລກທີ: 001 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ

# ລະບຽບ
# ວ່າດ້ວຍການບັນຊີ ແລະ ການກວດສອບ ວຽກງານຫຼັກຊັບ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມກົດໝາຍວ່າດ້ວຍການກວດສອບອິດສະຫຼະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;
- ອີງຕາມດໍາລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມໜັງສືສະເໜີຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 008/ສຄຄຊ, ລົງວັນທີ 20 ມີນາ 2015.

## ປະທານ ຄະນະກໍາມະການຄຸ້ມຄອງຫຼັກຊັບ ອອກລະບຽບ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ກໍານົດ ຫຼັກການ, ວິທີການ ແລະ ມາດຕະການ ກ່ຽວກັບ ການໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບໃນຂົງເຂດວຽກງານຫຼັກຊັບ ເພື່ອເຮັດໃຫ້ ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບລາວ, ວິສາຫະກິດບັນຊີ, ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ, ນັກກວດສອບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມການກໍານົດຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມມາດຕະຖານ ດ້ານການບັນຊີ ແລະ ການກວດສອບ ຂອງສາກົນ ແນໃສ່ສ້າງເອກະສານລາຍງານການເງິນໃຫ້ມີຄວາມໂປ່ງໃສ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ.

**ມາດຕາ 2 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນລະບຽບສະບັບນີ້ມີຄວາມໝາຍ ດັ່ງນີ້:

1. "ວິສາຫະກິດບັນຊີ" ໝາຍເຖິງ ບໍລິສັດທີ່ເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແກ່ກຸ່ມເປົ້າໝາຍໃນຂົງເຂດວຽກງານຫຼັກຊັບ ທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

2. "ວິສາຫະກິດກວດສອບ" ໝາຍເຖິງ ບໍລິສັດທີ່ເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃຫ້ແກ່ກຸ່ມເປົ້າໝາຍໃນຂົງເຂດວຽກງານຫຼັກຊັບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. **"ການບັນຊີ"** ໝາຍເຖິງ ການຮັບຮູ້, ການຄິດໄລ່, ການບັນທຶກ, ການຈັດວາງ ແລະ ການລາຍງານຂໍ້ມູນດ້ານການເງິນ ຈາກການເຄື່ອນໄຫວທຸລະກິດຂອງຫົວໜ່ວຍຖືບັນຊີ;
4. **"ການກວດສອບ"** ໝາຍເຖິງ ການທົບທວນ ແລະ ຢັ້ງຢືນ ກ່ຽວກັບເອກະສານລາຍງານການເງິນຂອງກຸ່ມເປົ້າໝາຍ ເພື່ອປະເມີນວ່າ: ການຈັດຕັ້ງປະຕິບັດວຽກງານການບັນຊີ ຂອງກຸ່ມເປົ້າໝາຍດັ່ງກ່າວ ສອດຄ່ອງກັບມາດຕະຖານການບັນຊີຂອງສາກົນທີ່ປະກາດໃຊ້ໃນແຕ່ລະໄລຍະ ຊຶ່ງການກວດສອບລວມມີ: ການກວດສອບເອກະສານລາຍງານການເງິນ, ການກວດສອບປະສິດທິພາບການດຳເນີນງານ ແລະ ການກວດສອບການຈັດຕັ້ງປະຕິບັດຕາມລະບຽບກົດໝາຍ;
5. "ຄະນະກວດສອບ" ໝາຍເຖິງ ບຸກຄົນທີ່ຖືກແຕ່ງຕັ້ງ ຫຼື ມອບໝາຍຈາກວິສາຫະກິດກວດສອບ ໃຫ້ເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ແກ່ກຸ່ມເປົ້າໝາຍໃນແຕ່ລະຄັ້ງ;
6. "ນັກຊ່ຽວຊານບັນຊີ" ໝາຍເຖິງ ບຸກຄົນທີ່ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີຈາກ ກະຊວງການເງິນທີ່ເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ໃນຂົງເຂດວຽກງານຫຼັກຊັບ ຊຶ່ງໄດ້ຜ່ານການຮັບຮອງຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
7. "ນັກກວດສອບ" ໝາຍເຖິງ ບຸກຄົນທີ່ໄດ້ຮັບໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກ ກະຊວງການເງິນ ທີ່ເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ ຊຶ່ງໄດ້ຜ່ານການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
8. "ພະນັກງານບັນຊີ" ໝາຍເຖິງ ຜູ້ຊ່ວຍຫົວໜ້າບັນຊີ ໃນການຈັດຕັ້ງປະຕິບັດວຽກງານບັນຊີ ແລະ ສ້າງເອກະສານລາຍງານການເງິນຂອງຫົວໜ່ວຍຖືບັນຊີ;
9. **"ເອກະສານລາຍງານການເງິນ"** ໝາຍເຖິງ ເອກະສານຕ່າງໆ ຊຶ່ງປະກອບດ້ວຍ: ໃບສະຫຼຸບຊັບສົມບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດລວມ, ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງ ແລະເອກະສານຊ້ອນທ້າຍ;
10. "ໃບຮັບຮອງ" ໝາຍເຖິງ ເອກະສານຢັ້ງຢືນການຮັບຮອງເອົາ ວິສາຫະກິດບັນຊີ, ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ ແລະ ນັກກວດສອບ ເພື່ອໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ ທີ່ອອກໃຫ້ໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
11. **"ຜູ້ຮຸ້ນສ່ວນບໍລິຫານ"** ໝາຍເຖິງ ນັກວິຊາຊີບການບັນຊີ ທີ່ຖືຮຸ້ນ ແລະ ມີສິດຕັດສິນບັນຫາ ໃນວິສາຫະກິດ ກ່ຽວກັບການປະຕິບັດຂໍ້ຜູກພັນ ໃນການໃຫ້ບໍລິການດ້ານວິຊາຊີບ;
12. **"ຜູ້ຮຸ້ນສ່ວນຮັບຜິດຊອບງານ"** ໝາຍເຖິງ ຜູ້ຮຸ້ນສ່ວນບໍລິຫານໃນວິສາຫະກິດກວດສອບ ທີ່ມີຄວາມຮັບຜິດຊອບ ຕໍ່ການປະຕິບັດຂໍ້ຜູກພັນ, ຜົນການກວດສອບ ແລະ ລາຍງານການກວດສອບ ຂອງວິສາຫະກິດ;
13. **"ກຸ່ມເປົ້າໝາຍ"** ໝາຍເຖິງ ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ພາກສ່ວນອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 3 ຫຼັກການການເຄື່ອນໄຫວວຽກງານການບັນຊີ ແລະ ການກວດສອບ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ເຄື່ອນໄຫວໃຫ້ການບໍລິການໃນຂົງເຂດວຽກງານຫຼັກຊັບ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ການປະຕິບັດຕາມລະບຽບກົດໝາຍ, ມາດຕະຖານວິຊາຊີບດ້ານການບັນຊີ ແລະ ການກວດສອບ;
2. ຄວາມເປັນເອກະລາດດ້ານວິຊາການ;

3. ໃຫ້ມີຄວາມຮອບຄອບ, ຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ;
4. ໃຫ້ມີຄວາມຍຸຕິທຳ, ໂປ່ງໃສ, ສັດຊື່ບໍລິສຸດ ແລະ ສາມາດກວດສອບໄດ້;
5. ການຮັກສາຄວາມລັບ ແລະ ມີຈັນຍາບັນດ້ານວິຊາຊີບ.

### ມາດຕາ 4 ເນື້ອໃນຂອງການກວດສອບ

ວິສາຫະກິດກວດສອບ ສາມາດກວດສອບຕໍ່ ກຸ່ມເປົ້າໝາຍ ປະກອບມີ ສາມ ເນື້ອໃນ ດັ່ງນີ້:

1. ກວດສອບຄວາມຖືກຕ້ອງ ແລະ ໂປ່ງໃສຂອງເອກະສານລາຍງານການເງິນຂອງ ກຸ່ມເປົ້າໝາຍ;
2. ກວດສອບການຜະລິດ ຫຼື ການບໍລິການຂອງ ກຸ່ມເປົ້າໝາຍ;
3. ກວດສອບການຈັດຕັ້ງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ກຸ່ມເປົ້າໝາຍ.

### ມາດຕາ 5 ຂອບເຂດການນຳໃຊ້

ລະບຽບສະບັບນີ້ນຳໃຊ້ສຳລັບ ກຸ່ມເປົ້າໝາຍ, ວິສາຫະກິດບັນຊີ, ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ, ນັກກວດສອບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການເຄື່ອນໄຫວວຽກງານການບັນຊີ ແລະ ການກວດສອບ ໃນຂົງເຂດວຽກງານຫຼັກຊັບ.

## ໝວດທີ 2
## ການປະຕິບັດການບັນຊີຂອງກຸ່ມເປົ້າໝາຍ

### ມາດຕາ 6 ການປະຕິບັດການບັນຊີ

ກຸ່ມເປົ້າໝາຍ ຕ້ອງປະຕິບັດມາດຕະຖານການບັນຊີຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ວາງອອກໃນແຕ່ລະໄລຍະຢ່າງເຂັ້ມງວດ.

ກຸ່ມເປົ້າໝາຍ ຕ້ອງແຕ່ງຕັ້ງຫົວໜ້າບັນຊີ ແລະ ພະນັກງານບັນຊີ ຈຳນວນໜຶ່ງໃນການຈັດຕັ້ງປະຕິບັດວຽກງານການບັນຊີ, ຄຸ້ມຄອງການບັນຊີ ແລະ ສ້າງເອກະສານລາຍງານການເງິນຂອງຕົນ ພ້ອມທັງລາຍງານການແຕ່ງຕັ້ງ ຫຼື ການປ່ຽນແປງໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນພາຍໃນກຳນົດເວລາ ສອງວັນ ລັດຖະການ ນັບແຕ່ວັນສຳເລັດການແຕ່ງຕັ້ງ ຫຼື ການປ່ຽນແປງເປັນຕົ້ນໄປ.

### ມາດຕາ 7 ການຄວບຄຸມ ແລະ ການກວດສອບພາຍໃນ

ກຸ່ມເປົ້າໝາຍ ຕ້ອງປະຕິບັດການຄວບຄຸມ ແລະ ການກວດສອບພາຍໃນ ກ່ຽວກັບການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການບັນຊີ ພ້ອມທັງສ້າງປຶ້ມຄູ່ມື ກ່ຽວກັບການບັນຊີ ແລະ ສ້າງລະບົບການຄວບຄຸມ ແລະ ການກວດສອບພາຍໃນ ກ່ຽວກັບການບັນຊີ ຊຶ່ງປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ວິທີການຈຳແນກ, ການຈັດປະເພດ, ການບັນທຶກ ແລະ ການລາຍງານຂໍ້ມູນທາງການບັນຊີ;
2. ວິທີການຄວບຄຸມຂໍ້ຜິດພາດຂອງຂໍ້ມູນທາງການບັນຊີ ແລະ ວິທີການແກ້ໄຂ;
3. ການກວດສອບພາຍໃນ ເປັນຕົ້ນ ການກວດກາ ແລະ ການປັບປຸງແກ້ໄຂຂໍ້ມູນທາງການບັນຊີ;
4. ວິທີການຄຸ້ມຄອງປຶ້ມບັນຊີ ແລະ ການເກັບຮັກສາຂໍ້ມູນທາງການບັນຊີ ລວມທັງຂັ້ນຕອນການຄວບຄຸມ ແລະ ປ້ອງກັນການປອມແປງ, ການແກ້ໄຂ, ຄວາມເສຍຫາຍ ແລະ ການທຳລາຍ ກ່ຽວກັບຂໍ້ມູນດ້ານການບັນຊີ;

5. ຄວາມຮັບຜິດຊອບຂອງພະນັກງານ ກ່ຽວກັບການກະກຽມ ແລະ ແຈ້ງຂໍ້ມູນທາງການບັນຊີ ໃຫ້ແກ່ມວນຊົນຮັບຮູ້ ແລະ ເຂົ້າໃຈ;
6. ເນື້ອໃນອື່ນທີ່ຈຳເປັນສຳລັບການກະກຽມຂໍ້ມູນທາງການບັນຊີທີ່ໜ້າເຊື່ອຖື ພ້ອມທັງແຈ້ງ ໃຫ້ແກ່ມວນຊົນຮັບຮູ້ ແລະ ເຂົ້າໃຈ.

## ໝວດທີ 3
## ການຮັບຮອງເອົາວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ

**ມາດຕາ 8 ເງື່ອນໄຂການຮັບຮອງເອົາວິສາຫະກິດບັນຊີ**

ວິສາຫະກິດບັນຊີ ທີ່ຈະຖືກຮັບຮອງຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 41 ແລະ ມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ໄດ້ຮັບໃບອະນຸຍາດໃຫ້ດຳເນີນວິສາຫະກິດບັນຊີຈາກ ກະຊວງການເງິນ;
2. ສະມາຊິກສະພາບໍລິຫານຢ່າງໜ້ອຍ ສອງຄົນຂຶ້ນໄປ ຕ້ອງມີໃບຢັ້ງຢືນເປັນນັກຊ່ຽວຊານບັນຊີຈາກ ກະຊວງການເງິນ;
3. ມີພະນັກງານວິຊາການທາງດ້ານການບັນຊີຢ່າງໜ້ອຍ ຫ້າຄົນຂຶ້ນໄປ ຊຶ່ງໃນນັ້ນຢ່າງໜ້ອຍ ສອງຄົນຕ້ອງມີໃບຢັ້ງຢືນເປັນນັກຊ່ຽວຊານບັນຊີຈາກ ກະຊວງການເງິນ ແລະ ທັງໝົດນັ້ນຕ້ອງຜ່ານການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ມີຄວາມຮູ້ຄວາມສາມາດໃນການນຳໃຊ້ ມາດຕະຖານສາກົນດ້ານການບັນຊີ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ທີ່ວາງອອກໃນແຕ່ລະໄລຍະເປັນຢ່າງດີ;
5. ເປັນສະມາຊິກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
6. ມີຖານະການເງິນດີ ຫຼື ການເຄື່ອນໄຫວທຸລະກິດຕ້ອງມີກຳໄລ ໜຶ່ງປີຄືນຫຼັງ ກ່ອນປີຍື່ນເອກະສານປະກອບການຂໍຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຍົກເວັ້ນ ວິສາຫະກິດບັນຊີທີ່ສ້າງຕັ້ງຂຶ້ນໃໝ່;
7. ມີແຜນການ ກ່ຽວກັບການເຄື່ອນໄຫວທຸລະກິດຂອງຕົນຢ່າງລະອຽດ ສາມປີຕໍ່ໜ້າ ນັບແຕ່ປີຍື່ນເອກະສານປະກອບເປັນຕົ້ນໄປ.

**ມາດຕາ 9 ເອກະສານປະກອບການຂໍຮັບຮອງເອົາວິສາຫະກິດບັນຊີ**

ເອກະສານປະກອບການຂໍຮັບຮອງເອົາວິສາຫະກິດບັນຊີ ມີດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບອະນຸຍາດໃຫ້ດຳເນີນວິສາຫະກິດບັນຊີຈາກ ກະຊວງການເງິນ;
3. ສຳເນົາໃບຢັ້ງຢືນເປັນນັກຊ່ຽວຊານບັນຊີຂອງ ສະມາຊິກສະພາບໍລິຫານຈາກ ກະຊວງການເງິນ;
4. ບັນຊີລາຍຊື່ພະນັກງານວິຊາການດ້ານການບັນຊີ ທີ່ມີໃບຢັ້ງຢືນເປັນນັກຊ່ຽວຊານບັນຊີຈາກ ກະຊວງການເງິນ ພ້ອມດ້ວຍຊີວະປະຫວັດຫຍໍ້ ແລະ ປະສົບການໃນການໃຫ້ການບໍລິການດ້ານການບັນຊີຂອງພວກກ່ຽວ;
5. ໃບຢັ້ງຢືນຈາກສານປະຊາຊົນ ບໍ່ໃຫ້ກາຍສາມເດືອນ ເພື່ອຢັ້ງຢືນວ່າ ບໍ່ມີສຳນວນຄະດີກ່ຽວກັບ ວິສາຫະກິດບັນຊີດັ່ງກ່າວ ຄ້າງຄາຢູ່ສານປະຊາຊົນ;
6. ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ ແລະ ກົດລະບຽບຂອງບໍລິສັດ;

7. ສຳເນົາໃບຢັ້ງຢືນການເປັນສະມາຊິກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
8. ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ກ່ອນປີຍື່ນເອກະສານປະກອບການຂໍຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ, ຍົກເວັ້ນ ວິສາຫະກິດບັນຊີ ທີ່ສ້າງຕັ້ງຂຶ້ນໃໝ່. ເອກະສານລາຍງານການເງິນຕ້ອງ ຄົບຖ້ວນ ແລະ ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
9. ແຜນການກ່ຽວກັບການເຄື່ອນໄຫວທຸລະກິດຂອງຕົນຢ່າງລະອຽດ ສາມປີຕໍ່ໜ້າ ພາຍຫຼັງທີ່ໄດ້ຮັບການຮັບຮອງເປັນຕົ້ນໄປ.

**ມາດຕາ 10 ການພິຈາລະນາການຂໍຮັບຮອງເອົາວິສາຫະກິດບັນຊີ**

ເມື່ອໄດ້ຮັບເອກະສານປະກອບການຂໍຮັບຮອງເອົາວິສາຫະກິດບັນຊີ ຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຮັບຮອງ ຫຼື ປະຕິເສດ ໃຫ້ແກ່ວິສາຫະກິດບັນຊີພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບເອກະສານປະກອບ ເປັນຕົ້ນໄປ. ກໍລະນີ ປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 11 ເງື່ອນໄຂການຮັບຮອງເອົານັກຊ່ຽວຊານບັນຊີ**

ນັກຊ່ຽວຊານບັນຊີ ທີ່ຈະຖືກຮັບຮອງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ບໍ່ແມ່ນ ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ພະນັກງານຕາມສັນຍາທີ່ກ່ຽວຂ້ອງກັບພາກລັດ ເຄື່ອນໄຫວທຸລະກິດດ້ານການບັນຊີ ໃນຂົງເຂດວຽກງານຫຼັກຊັບ;
2. ຕ້ອງເປັນພະນັກງານວິຊາການປະຈຳ, ເຮັດວຽກງານການບັນຊີຕົວຈິງ ແລະ ມີປະສົບການໃນການໃຫ້ການບໍລິການດ້ານການບັນຊີ ຢ່າງໜ້ອຍ ສາມປີຂຶ້ນໄປ ແລະ ມີຄວາມຮູ້ຄວາມສາມາດໃນການບໍລິການດ້ານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ການບໍລິຫານ, ການເງິນ, ພາສີ ແລະ ອາກອນ;
3. ມີຄວາມຮູ້ດ້ານວິຊາສະເພາະໃດໜຶ່ງ ເປັນຕົ້ນ ການບັນຊີ, ການເງິນ, ການທະນາຄານ, ການບໍລິຫານທຸລະກິດ, ເສດຖະສາດ, ການຕະຫຼາດ, ສະຖິຕິ, ການສື່ສານທາງດ້ານການເຄື່ອນໄຫວທຸລະກິດ, ລະບົບຈັດການຂໍ້ມູນ-ຂ່າວສານ, ກົດຈັນຍາບັນ, ກົດໝາຍ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຊ່ວຍຜູ້ບໍລິຫານໃນການເຄື່ອນໄຫວທຸລະກິດ;
4. ມີຄວາມຮູ້ຄວາມສາມາດໃນການນຳໃຊ້ ມາດຕະຖານສາກົນດ້ານການບັນຊີ ແລະ ມາດຕະການສາກົນດ້ານການລາຍງານການເງິນ;
5. ມີລະບອບແບບແຜນໃນການເຄື່ອນໄຫວວຽກງານ, ມີທັດສະນະຄວາມເປັນຜູ້ນຳ, ມີຄວາມສາມາດໃນການ ວິເຄາະ, ຕີລາຄາ ແລະ ແກ້ໄຂບັນຫາ.

**ມາດຕາ 12 ເອກະສານປະກອບການຂໍຮັບຮອງເອົານັກຊ່ຽວຊານບັນຊີ**

ເອກະສານປະກອບການຂໍຮັບຮອງເອົານັກຊ່ຽວຊານບັນຊີ ມີດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບຢັ້ງຢືນເປັນນັກຊ່ຽວຊານບັນຊີຈາກ ກະຊວງການເງິນ;
3. ສຳເນົາໃບປະກາສະນີຍະບັດດ້ານການບັນຊີ ແລະ ດ້ານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ການເງິນ, ການທະນາຄານ, ການບໍລິຫານທຸລະກິດ, ເສດຖະສາດ, ການຕະຫຼາດ, ສະຖິຕິ, ການສື່ສານທາງດ້ານການດຳເນີນທຸລະກິດ, ລະບົບຈັດການຂໍ້ມູນ-ຂ່າວສານ, ກົດຈັນຍາບັນ ແລະ ກົດໝາຍ (ຖ້າມີ);

4. ໃບແຈ້ງໂທດ ບໍ່ໃຫ້ກາຍສາມເດືອນ;
5. ໃບຢັ້ງຢືນທີ່ຢູ່ປັດຈຸບັນ;
6. ຊີວະປະຫວັດຫຍໍ້.

## ມາດຕາ 13 ການພິຈາລະນາການຂໍຮັບຮອງເອົານັກຊ່ຽວຊານບັນຊີ

ເມື່ອໄດ້ຮັບເອກະສານປະກອບການຂໍຮັບຮອງເອົານັກຊ່ຽວຊານບັນຊີ ຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການ ຮັບຮອງ ຫຼື ປະຕິເສດ ພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບເອກະສານປະກອບ ເປັນຕົ້ນໄປ. ກໍລະນີ ປະຕິເສດ ກໍຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

## ມາດຕາ 14 ຄ່າທຳນຽມ

ວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ ທີ່ເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີຢູ່ໃນຂົງເຂດວຽກງານຫຼັກຊັບ ຕ້ອງເສຍຄ່າທຳນຽມໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນເອກະສານປະກອບການຂໍຮັບຮອງ ເອົາວິສາຫະກິດບັນຊີ ຈຳນວນ ສິບຫ້າລ້ານກີບ ແລະ ນັກຊ່ຽວຊານບັນຊີ ຈຳນວນ ສິບລ້ານກີບ ແລະ ຕ້ອງຊຳລະພາຍໃນວັນຍື່ນເອກະສານດັ່ງກ່າວ;
2. ຄ່າຍື່ນເອກະສານປະກອບການຂໍຕໍ່ອາຍຸໃບຮັບຮອງ ວິສາຫະກິດບັນຊີ ຈຳນວນ ສິບລ້ານກີບ ແລະ ນັກຊ່ຽວຊານບັນຊີ ຈຳນວນ ຫ້າລ້ານກີບ ແລະ ຕ້ອງຊຳລະພາຍໃນວັນຍື່ນເອກະສານດັ່ງກ່າວ;
3. ຄ່າຄຸ້ມຄອງປະຈຳປີ ສຳລັບ ວິສາຫະກິດບັນຊີ ຈຳນວນ ສິບຫ້າລ້ານກີບ ແລະ ນັກຊ່ຽວຊານບັນຊີ ຈຳນວນ ຫ້າລ້ານກີບ ແລະ ຕ້ອງຊຳລະພາຍໃນເດືອນ ມັງກອນ ຂອງປີຖັດໄປ.

ກໍລະນີ ວິສາຫະກິດບັນຊີ ຫາກບໍ່ໄດ້ໃຫ້ການບໍລິການດ້ານການບັນຊີຢູ່ໃນຂົງເຂດວຽກງານຫຼັກຊັບ ແກ່ກຸ່ມເປົ້າໝາຍພາຍໃນປີ ແມ່ນຈະໄດ້ຮັບການຍົກເວັ້ນຄ່າຄຸ້ມຄອງປະຈຳປີ ສຳລັບວິສາຫະກິດຊັບຊີ ແລະ ນັກຊ່ຽວຊານບັນຊີ.

## ມາດຕາ 15 ການເກັບຮັກສາເອກະສານ ແລະ ຂໍ້ມູນດ້ານການບັນຊີ

ກຸ່ມເປົ້າໝາຍ ຕ້ອງເກັບຮັກສາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງກັບການບັນຊີຂອງຕົນໄວ້ ຢ່າງໜ້ອຍ ສິບປີ.

## ມາດຕາ 16 ອາຍຸການຮັບຮອງເອົາວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ

ອາຍຸໃບຮັບຮອງເອົາວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ ທີ່ຈະມາເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ຢູ່ໃນຂົງເຂດວຽກງານຫຼັກຊັບແມ່ນ ສາມປີ ນັບແຕ່ວັນໄດ້ຮັບການຮັບຮອງເປັນຕົ້ນໄປ. ວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ ທີ່ມີຈຸດປະສົງສືບຕໍ່ ເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ຢູ່ໃນຂົງເຂດວຽກງານຫຼັກຊັບ ຕ້ອງຍື່ນເອກະສານປະກອບການຂໍຕໍ່ອາຍຸໃບຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ ສີ່ສິບຫ້າວັນ ກ່ອນວັນໝົດອາຍຸ.

ກໍລະນີ ວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ ບໍ່ຍື່ນເອກະສານປະກອບການຂໍຕໍ່ອາຍຸໃບຮັບຮອງ ພາຍໃນກຳນົດເວລາດັ່ງກ່າວ ແມ່ນຈະຖືກຖອນໃບຮັບຮອງ.

ກໍລະນີ ວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ ທີ່ຖືກຖອນໃບຮັບຮອງ ຫາກມີຈຸດປະສົງສືບຕໍ່ເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ຢູ່ໃນຂົງເຂດວຽກງານຫຼັກຊັບຕໍ່ໄປອີກ ຕ້ອງຜ່ານການຮັບຮອງຄືນໃໝ່.

## ໝວດທີ 4
## ການຮັບຮອງເອົາວິສາຫະກິດກວດສອບ ແລະ ນັກກວດສອບ

### ມາດຕາ 17 ເງື່ອນໄຂການຮັບຮອງເອົາວິສາຫະກິດກວດສອບ

ວິສາຫະກິດກວດສອບ ທີ່ຈະຖືກຮັບຮອງຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 43 ແລະ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 87 ແລະ ມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ໄດ້ຮັບໃບອະນຸຍາດໃຫ້ດຳເນີນວິສາຫະກິດກວດສອບຈາກ ກະຊວງການເງິນ;
2. ສະມາຊິກສະພາບໍລິຫານ ຢ່າງໜ້ອຍ ສອງຄົນຂຶ້ນໄປ ຕ້ອງມີໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຫຼື ໃບອະນຸຍາດເປັນຜູ້ກວດສອບຕາມກົດໝາຍຈາກ ກະຊວງການເງິນ;
3. ມີພະນັກງານວິຊາການດ້ານການບັນຊີ ແລະ ການກວດສອບ ຢ່າງໜ້ອຍ ຫ້າຄົນຂຶ້ນໄປ ຊຶ່ງໃນນັ້ນຢ່າງໜ້ອຍ ສອງຄົນຂຶ້ນໄປ ຕ້ອງມີໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຫຼື ໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກ ກະຊວງການເງິນ ແລະ ທັງໝົດນັ້ນຕ້ອງຜ່ານການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ມີຄວາມຮູ້ຄວາມສາມາດໃນການນຳໃຊ້ ມາດຕະຖານສາກົນດ້ານການບັນຊີ ແລະ ການກວດສອບ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ທີ່ອາງອອກໃນແຕ່ລະໄລຍະເປັນຢ່າງດີ;
5. ມີຖານະການເງິນດີ ຫຼື ການເຄື່ອນໄຫວທຸລະກິດຕ້ອງມີກຳໄລ ໜຶ່ງປີຄືນຫຼັງ ກ່ອນປີຍື່ນເອກະສານປະກອບການຂໍຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຍົກເວັ້ນ ວິສາຫະກິດກວດສອບ ທີ່ສ້າງຕັ້ງຂຶ້ນໃໝ່;
6. ມີຊື່ສຽງດີ ແລະ ເປັນທີ່ຍອມຮັບຂອງມວນຊົນ ກ່ຽວກັບການເຄື່ອນໄຫວທຸລະກິດ ແລະ ການໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບ;
7. ມີສັນຍາປະກັນໄພ ພ້ອມດ້ວຍນະໂຍບາຍການປະກັນໄພດ້ານວິຊາຊີບ;
8. ມີແຜນການກ່ຽວກັບການເຄື່ອນໄຫວທຸລະກິດຂອງຕົນຢ່າງລະອຽດ ສາມປີຕໍ່ໜ້າ ນັບແຕ່ປີຍື່ນເອກະສານປະກອບເປັນຕົ້ນໄປ.

### ມາດຕາ 18 ເອກະສານປະກອບການຂໍຮັບຮອງເອົາວິສາຫະກິດກວດສອບ

ເອກະສານປະກອບການຂໍຮັບຮອງເອົາວິສາຫະກິດກວດສອບ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 89 ແລະ ຕ້ອງມີເອກະສານປະກອບເພີ່ມເຕີມ ດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບອະນຸຍາດໃຫ້ດຳເນີນວິສາຫະກິດກວດສອບຈາກ ກະຊວງການເງິນ;
3. ສຳເນົາໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຫຼື ໃບອະນຸຍາດເປັນນັກກວດສອບຕາມກົດໝາຍ ຂອງສະມາຊິກສະພາບໍລິຫານຈາກ ກະຊວງການເງິນ;

4. ບັນຊີລາຍຊື່ພະນັກງານວິຊາການດ້ານການບັນຊີ ແລະ ການກວດສອບ ທີ່ມີໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຫຼື ໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກ ກະຊວງການເງິນ;
5. ໃບຢັ້ງຢືນຈາກສານປະຊາຊົນ ບໍ່ໃຫ້ກາຍສາມເດືອນ ເພື່ອຢັ້ງຢືນວ່າ ບໍ່ມີສໍານວນຄະດີກ່ຽວກັບ ວິສາຫະກິດກວດສອບດັ່ງກ່າວ ຄ້າງຄາຢູ່ສານປະຊາຊົນ;
6. ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ກ່ອນປີຍື່ນເອກະສານປະກອບການຂໍການຮັບຮອງຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ, ຍົກເວັ້ນ ວິສາຫະກິດກວດສອບ ທີ່ສ້າງຕັ້ງຂຶ້ນໃໝ່. ເອກະສານລາຍງານການເງິນຕ້ອງ ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
7. ສໍາເນົາສັນຍາປະກັນໄພ ພ້ອມດ້ວຍນະໂຍບາຍການປະກັນໄພດ້ານວິຊາຊີບ;
8. ແຜນການກ່ຽວກັບການເຄື່ອນໄຫວທຸລະກິດຂອງຕົນຢ່າງລະອຽດ ສາມປີຕໍ່ໜ້າ ພາຍຫຼັງທີ່ໄດ້ຮັບການຮັບຮອງເປັນຕົ້ນໄປ.

## ມາດຕາ 19 ເງື່ອນໄຂການຮັບຮອງເອົານັກກວດສອບ

ນັກກວດສອບ ທີ່ຈະຖືກຮັບຮອງຕ້ອງມີເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 88 ແລະ ມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ບໍ່ແມ່ນ ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານລັດວິສາຫະກິດ, ພະນັກງານຕາມສັນຍາທີ່ກ່ຽວຂ້ອງກັບພາກລັດ ເຄື່ອນໄຫວທຸລະກິດດ້ານການບັນຊີ ແລະ ການກວດສອບໃນຂົງເຂດວຽກງານຫຼັກຊັບ;
2. ຕ້ອງເປັນພະນັກງານວິຊາການປະຈໍາ, ເຮັດວຽກງານການບັນຊີ ແລະ ການກວດສອບຕົວຈິງ ແລະ ມີປະສົບການ ດ້ານການບັນຊີ ແລະ ການກວດສອບ ຢ່າງໜ້ອຍ ສາມປີຂຶ້ນໄປ;
3. ມີຄວາມຮູ້ດ້ານວິຊາສະເພາະໃດໜຶ່ງ ເປັນຕົ້ນ: ການເງິນ, ການທະນາຄານ, ການບໍລິຫານທຸລະກິດ, ເສດຖະສາດ, ການຕະຫຼາດ, ສະຖິຕິ, ການສື່ສານທາງດ້ານການດໍາເນີນທຸລະກິດ, ລະບົບຈັດການຂໍ້ມູນ-ຂ່າວສານ, ກົດຈັນຍາບັນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ເພື່ອຊ່ວຍຜູ້ບໍລິຫານໃນການເຄື່ອນໄຫວທຸລະກິດ;
4. ມີຄວາມຮູ້ຄວາມສາມາດໃນການນໍາໃຊ້ ມາດຕະຖານສາກົນດ້ານການບັນຊີ ແລະ ການກວດສອບ ພ້ອມທັງ ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບ ມາດຕະການສາກົນດ້ານການລາຍງານການເງິນ;
5. ມີລະບອບແບບແຜນໃນການເຄື່ອນໄຫວວຽກງານ, ມີທັດສະນະຄວາມເປັນຜູ້ນໍາ, ມີຄວາມສາມາດໃນການ ວິເຄາະ, ຕີລາຄາ ແລະ ແກ້ໄຂບັນຫາ.

## ມາດຕາ 20 ເອກະສານປະກອບການຂໍຮັບຮອງເອົານັກກວດສອບ

ເອກະສານປະກອບການຂໍຮັບຮອງນັກກວດສອບ ມີດັ່ງນີ້:

1. ຄໍາຮ້ອງຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ສໍາເນົາໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ແລະ ໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກກະຊວງການເງິນ;
3. ສໍາເນົາໃບປະກາສະນີຍະບັດດ້ານການບັນຊີ ແລະ ດ້ານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ: ການເງິນ, ການທະນາຄານ, ການບໍລິຫານທຸລະກິດ, ເສດຖະສາດ, ການຕະຫຼາດ, ສະຖິຕິ, ການສື່ສານທາງດ້ານການດໍາເນີນທຸລະກິດ, ລະບົບຈັດການຂໍ້ມູນ-ຂ່າວສານ, ກົດຈັນຍາບັນ ແລະ ກົດໝາຍ (ຖ້າມີ);

4. ໃບແຈ້ງໂທດ ບໍ່ໃຫ້ກາຍສາມເດືອນ;
5. ໃບຢັ້ງຢືນທີ່ຢູ່ປັດຈຸບັນ;
6. ຊີວະປະຫວັດຫຍໍ້;
7. ສຳເນົາສັນຍາຮ່ວມມືກັບຮຸ້ນສ່ວນບໍລິຫານ;
8. ຊີວະປະຫວັດຂອງຮຸ້ນສ່ວນບໍລິຫານ.

**ມາດຕາ 21** ການນຳໃຊ້ບົດບັນຍັດຂອງ ການຮັບຮອງເອົາວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ ສຳລັບ ການຮັບຮອງເອົາວິສາຫະກິດກວດສອບ ແລະ ນັກກວດສອບ

ນອກຈາກບົດບັນຍັດຕ່າງໆ ທີ່ໄດ້ກຳນົດໄວ້ໃນໝວດນີ້ ການພິຈາລະນາການຂໍຮັບຮອງເອົາວິສາຫະກິດກວດສອບ, ການພິຈາລະນາການຂໍຮັບຮອງເອົານັກກວດສອບ, ຄ່າທຳນຽມ, ການເກັບຮັກສາເອກະສານ ແລະ ຂໍ້ມູນດ້ານການກວດສອບ ແລະ ອາຍຸການຮັບຮອງເອົາວິສາຫະກິດກວດສອບ ແລະ ນັກກວດສອບ ໃຫ້ປະຕິບັດຕາມບົດບັນຍັດຂອງ ການພິຈາລະນາການຂໍຮັບຮອງເອົາວິສາຫະກິດບັນຊີ, ການພິຈາລະນາການຂໍຮັບຮອງເອົານັກຊ່ຽວຊານບັນຊີ, ຄ່າທຳນຽມ, ການເກັບຮັກສາເອກະສານ ແລະ ຂໍ້ມູນດ້ານການບັນຊີ ແລະ ອາຍຸການຮັບຮອງເອົາວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 3 ການຮັບຮອງເອົາວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ ຂອງລະບຽບສະບັບນີ້.

## ໝວດທີ 5
## ການເຄື່ອນໄຫວວຽກງານການບັນຊີ ແລະ ການກວດສອບ

**ມາດຕາ 22** ການເຄື່ອນໄຫວວຽກງານການບັນຊີ ແລະ ການກວດສອບ

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງເຄື່ອນໄຫວຕາມລະບຽບການ ດັ່ງນີ້:

1. ຈັນຍາບັນດ້ານວິຊາຊີບ;
2. ມາດຕະຖານພາຍໃນດ້ານວິຊາຊີບ;
3. ການຮັບປະກັນຄຸນນະພາບພາຍໃນວິສາຫະກິດ;
4. ການປະກັນໄພຄ່າເສຍຫາຍດ້ານວິຊາຊີບ;
5. ການຍົກລະດັບດ້ານວິຊາຊີບແບບຕໍ່ເນື່ອງ.

**ມາດຕາ 23** ສິດ ແລະ ໜ້າທີ່ຂອງວິສາຫະກິດບັນຊີ

ວິສາຫະກິດບັນຊີ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 50 ແລະ ມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

**ສິດຂອງວິສາຫະກິດບັນຊີ**

1. ໃຫ້ການບໍລິການດ້ານການບັນຊີ ລວມທັງການສ້າງເອກະສານລາຍງານການເງິນ;
2. ອອກແບບ ແລະ ສ້າງລະບົບຂໍ້ມູນດ້ານການເງິນ;
3. ຄຳນວນຄ່າສະເພາະທາງສະຖິຕິ;
4. ເປັນຜູ້ກວດສອບພາຍໃນ;
5. ໃຫ້ຄຳປຶກສາດ້ານ ການບໍລິຫານ, ການດຳເນີນງານ ແລະ ບຸກຄະລາກອນ.

ໜ້າທີ່ຂອງວິສາຫະກິດບັນຊີ

1. ພັດທະນາບຸກຄະລາກອນໂດຍສະເພາະແມ່ນນັກກວດສອບທີ່ຖືສັນຊາດລາວ ກ່ຽວກັບຮູບແບບ ຫຼື ວິທີການໃນການໃຫ້ຄຳປຶກສາດ້ານການບັນຊີ ໃຫ້ໄດ້ຕາມມາດຕະຖານສາກົນ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວໃນແຕ່ລະໄລຍະ;
2. ລາຍງານໃຫ້ ສຳນັກງານຄະນະກຳມະການຄຸ້ມຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ເປັນຕົ້ນແມ່ນ:
   - 2.1. ການປ່ຽນແປງຊື່, ທີ່ຕັ້ງຂອງວິສາຫະກິດ, ໂຄງປະກອບການຈັດຕັ້ງ, ຈຳນວນຜູ້ຮຸ້ນສ່ວນບໍລິຫານ, ພະນັກງານ, ຈຳນວນຜູ້ບໍລິຫານ, ຜູ້ຖືຮຸ້ນ, ການເຄື່ອນໄຫວທຸລະກິດ, ທຶນຈົດທະບຽນ, ແຜນການຕະຫຼາດ ແລະ ກົດລະບຽບພາຍໃນຂອງວິສາຫະກິດ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນທີ່ມີການປ່ຽນແປງເປັນຕົ້ນໄປ;
   - 2.2. ສັນຍາຕ່າງໆທີ່ຕົກລົງກັບກຸ່ມເປົ້າໝາຍ ລວມທັງແຜນການລະອຽດກ່ຽວກັບການໃຫ້ບໍລິການແກ່ກຸ່ມເປົ້າໝາຍ ພາຍໃນກຳນົດເວລາ ຫ້າວັນລັດຖະການ ກ່ອນວັນເລີ່ມຕົ້ນໃຫ້ການບໍລິການເປັນຕົ້ນໄປ;
   - 2.3. ການດຳເນີນທຸລະກິດຂອງຕົນ ປະຈຳຫົກເດືອນຕົ້ນປີ ພາຍໃນກຳນົດເວລາ ຫົກສິບວັນ ນັບແຕ່ວັນສິ້ນສຸດໄຕມາດສອງ ເປັນຕົ້ນໄປ ແລະ ປະຈຳປີ ພາຍໃນກຳນົດເວລາ ໜຶ່ງຮ້ອຍຊາວວັນ ນັບແຕ່ວັນສິ້ນສຸດປີການບັນຊີ ເປັນຕົ້ນໄປ;
3. ຈັດຝຶກອົບຮົມຍົກລະດັບດ້ານວິຊາຊີບໃຫ້ ນັກຊ່ຽວຊານບັນຊີ ຢ່າງໜ້ອຍ ໜຶ່ງຮ້ອຍຊາວຊົ່ວໂມງ ຕໍ່ສາມປີ ໃນນັ້ນປະກອບດ້ວຍກົດຈັນຍາບັນ ບໍ່ໃຫ້ຫຼຸດ ສີ່ຊົ່ວໂມງ;
4. ຜູ້ທີ່ຈະລົງໄປໃຫ້ການບໍລິການດ້ານການບັນຊີ ແຕ່ລະຄັ້ງແມ່ນ ບໍ່ໃຫ້ຫຼຸດ ສາມທ່ານ ຊຶ່ງຕ້ອງແມ່ນຜູ້ທີ່ມີປະສົບການ, ຄວາມຮູ້ກ່ຽວກັບການເຄື່ອນໄຫວທຸລະກິດຂອງກຸ່ມເປົ້າໝາຍເປັນຢ່າງດີ ແລະ ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ທັງໝົດນັ້ນຕ້ອງປະຕິບັດໜ້າທີ່ຂອງຕົນແຕ່ຕົ້ນຈົນສຳເລັດຮອບດ້ານ ຈຶ່ງສາມາດໄປໃຫ້ບໍລິການດ້ານການບັນຊີຕໍ່ກັບກຸ່ມເປົ້າໝາຍອື່ນ. ກໍລະນີ ຖ້າຈະໃຫ້ການບໍລິການດ້ານການບັນຊີ ຫຼາຍກວ່າໜຶ່ງກຸ່ມເປົ້າໝາຍໃນເວລາດຽວກັນ ວິສາຫະກິດ ຕ້ອງຮັບປະກັນວ່າ ຜູ້ທີ່ຈະລົງໄປໃຫ້ການບໍລິການດ້ານການບັນຊີນັ້ນ ຕ້ອງບໍ່ຫຼຸດ ສາມທ່ານຕໍ່ກັບໜຶ່ງກຸ່ມເປົ້າໝາຍ ແລະ ຕ້ອງແມ່ນຜູ້ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊັ່ນດຽວກັນ, ຍົກເວັ້ນກໍລະນີຈຳເປັນ ຕາມການພິຈາລະນາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມແຕ່ລະກໍລະນີ;
5. ປະຕິບັດຕາມກົດຈັນຍາບັນດ້ານການບັນຊີ ທີ່ໄດ້ຮັບການຮັບຮອງຈາກ ອົງການທີ່ມີສິດອຳນາດກ່ຽວຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

### ມາດຕາ 24 ສິດ ແລະ ໜ້າທີ່ຂອງນັກຊ່ຽວຊານບັນຊີ

ນັກຊ່ຽວຊານບັນຊີ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 38 ແລະ 39 ແລະ ມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

ສິດຂອງນັກຊ່ຽວຊານບັນຊີ

1. ໃຫ້ການບໍລິການດ້ານການບັນຊີ ແກ່ກຸ່ມເປົ້າໝາຍໃຫ້ສອດຄ່ອງກັບເນື້ອໃນທີ່ຕິດພັນກັບການໃຫ້ການບໍລິການຂອງຕົນ ແລະ ສຳເລັດຕາມກຳນົດເວລາ;
2. ພັດທະນາຄວາມຮູ້ທາງດ້ານການບັນຊີ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວໃນແຕ່ລະໄລຍະ;

3. ເຂົ້າເຖິງແຫຼ່ງຂໍ້ມູນທີ່ຕິດພັນກັບເນື້ອໃນຂອງການໃຫ້ບໍລິການດ້ານການບັນຊີຂອງ ກຸ່ມເປົ້າໝາຍ

ໜ້າທີ່ຂອງນັກຊ່ຽວຊານບັນຊີ

1. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນການລົງກວດກາ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
2. ລາຍງານໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ກ່ຽວກັບໄລຍະເວລາ ແລະ ລາຍລະອຽດໃນການໃຫ້ບໍລິການຂອງຕົນ;
3. ຮັກສາຄວາມລັບຕໍ່ກັບບັນດາຂໍ້ມູນ ແລະ ເອກະສານຕ່າງໆ ຂອງກຸ່ມເປົ້າໝາຍ ທີ່ຕົນໄດ້ຮັບຮູ້ ໃນເວລາເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ເວັ້ນເສຍແຕ່ມີຄໍາສັ່ງຈາກອົງການທີ່ມີສິດອໍານາດທີ່ກ່ຽວຂ້ອງ;
4. ເຂົ້າຮ່ວມການຝຶກອົບຮົມຍົກລະດັບດ້ານວິຊາຊີບການບັນຊີ ຢ່າງໜ້ອຍ ໜຶ່ງຮ້ອຍຊາວຊົ່ວໂມງ ຕໍ່ສາມປີ ໃນນັ້ນປະກອບດ້ວຍກົດຈັນຍາບັນ ບໍ່ໃຫ້ຫຼຸດ ສີ່ຊົ່ວໂມງ;
5. ສໍາເນົາໃບຢັ້ງຢືນການເຂົ້າຮ່ວມການຝຶກອົບຮົມສົ່ງໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຊາບ ໂດຍຜ່ານການເຊັນຢັ້ງຢືນຈາກ ພາກສ່ວນທີ່ໃຫ້ການຝຶກອົບຮົມ;
6. ປະຕິບັດຕາມກົດຈັນຍາບັນດ້ານການບັນຊີ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອໍານາດກ່ຽວຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
7. ປະຕິບັດພັນທະຕ່າງໆທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງກໍານົດໄວ້ຢ່າງຢ່າງຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ;

**ມາດຕາ 25 ສິດ ແລະ ໜ້າທີ່ຂອງວິສາຫະກິດກວດສອບ**

ວິສາຫະກິດກວດສອບ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 51 ແລະ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 91 ແລະ ມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

ສິດຂອງວິສາຫະກິດກວດສອບ

1. ຮ່ວມມືກັບ ຜູ້ຮຸ້ນສ່ວນຮັບຜິດຊອບງານ ໃດໜຶ່ງໄດ້ຕິດຕໍ່ກັນໄດ້ສູງສຸດບໍ່ເກີນ ຫ້າປີ ແລະ ສາມາດຮ່ວມມືກັນໄດ້ອີກຫຼັງຈາກ ສາມປີ ນັບແຕ່ວັນສິ້ນສຸດການຮ່ວມມືກັນເປັນຕົ້ນໄປ, ກໍລະນີທີ່ມີການຮ່ວມມືກັບ ຜູ້ຮຸ້ນສ່ວນຮັບຜິດຊອບງານ ໃດໜຶ່ງມາກ່ອນແລ້ວ ແມ່ນສາມາດຮ່ວມມືກັນໄດ້ອີກຕາມກໍານົດໄລຍະເວລາທີ່ຍັງເຫຼືອເພື່ອໃຫ້ຄົບ ຫ້າປີ;
2. ຮຽກຮ້ອງເອົາການໃຊ້ແທນຄ່າເສຍຫາຍ ໃນກໍລະນີ ກຸ່ມເປົ້າໝາຍບໍ່ໃຫ້ຄວາມຮ່ວມມືໃນ ການກວດສອບ ຊຶ່ງເປັນສາເຫດກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ ວິສາຫະກິດກວດສອບ.

ໜ້າທີ່ຂອງວິສາຫະກິດກວດສອບ

1. ລາຍງານໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ເປັນຕົ້ນແມ່ນ:
   1.1. ກຸ່ມເປົ້າໝາຍບໍ່ໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນເຂົ້າໃນການກວດສອບ ຕໍ່ກັບບັນຫາທີ່ຕິດພັນກັບເນື້ອໃນຂອງ ການກວດສອບ ແລະ ບໍ່ໃຫ້ຄວາມຮ່ວມມືດ້ານອື່ນໃນການກວດສອບ;

1.2. ການປ່ຽນແປງຊື່, ທີ່ຕັ້ງຂອງບໍລິສັດ ໂຄງປະກອບການຈັດຕັ້ງ, ຈຳນວນຮຸ້ນສ່ວນບໍລິຫານ, ພະນັກງານ, ຈຳນວນຜູ້ບໍລິຫານ, ຜູ້ຖືຮຸ້ນ, ການເຄື່ອນໄຫວທຸລະກິດ, ທຶນຈົດທະບຽນ, ແຜນການຕະຫຼາດ ແລະ ກົດລະບຽບພາຍໃນຂອງບໍລິສັດ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນທີ່ ມີການປ່ຽນແປງເປັນຕົ້ນໄປ;

1.3. ການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນປະຈຳປີ ແລະ ເອກະສານການກວດສອບອື່ນ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

1.4. ຖືກຍົກເລີກ, ໂຈະ ຫຼື ສິ້ນສຸດການໃຫ້ບໍລິການດ້ານການບັນຊີ ຫຼື ການກວດສອບຈາກ ກຸ່ມເປົ້າໝາຍ ພາຍໃນກຳນົດເວລາ ເຈັດວັນ ລັດຖະການ ນັບແຕ່ວັນທີ່ຖືກຍົກເລີກ, ໂຈະ ຫຼື ສິ້ນສຸດການໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບ ເປັນຕົ້ນໄປ;

1.5. ການປ່ຽນແປງຕ່າງໆທີ່ສຳຄັນເປັນຕົ້ນແມ່ນ ສະພາຜູ້ບໍລິຫານ, ກົດລະບຽບພາຍໃນ, ໂຄງຮ່າງການຈັດຕັ້ງພາຍໃນວິສາຫະກິດກວດສອບ ແລະ ຈຳນວນຜູ້ກວດສອບທີ່ໄດ້ຮັບການຮັບຮອງພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນທີ່ມີການປ່ຽນແປງ ເປັນຕົ້ນໄປ;

1.6. ລາຍງານກ່ຽວກັບສະພາບ ແລະ ຜົນການກວດສອບ ກຸ່ມເປົ້າໝາຍທຸກຄັ້ງ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

2. ບໍລິສັດກວດສອບ ຕ້ອງລາຍງານສິ່ງທີ່ກວດພົບໃຫ້ຖືກຕ້ອງຕາມຄວາມເປັນຈິງ, ຄົບຖ້ວນ ແລະ ສົມເຫດສົມຜົນໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

2.1. ພົບເຫັນການກະທຳຜິດຕ່າງໆ ທີ່ສົ່ງ ຫຼື ອາດສົ່ງຜົນກະທົບໃນການຕັດສິນໃຈຂອງຜູ້ລົງທຶນໃນຫຼັກຊັບ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ;

2.2. ພົບເຫັນຄວາມເສັຍຫາຍທີ່ ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ ທີ່ມີມູນຄ່າແຕ່ ສິບສ່ວນຮ້ອຍ ຂຶ້ນໄປ ຂອງມູນຄ່າຊັບສິນຂອງ ກຸ່ມເປົ້າໝາຍ;

2.3. ພົບເຫັນການປ່ຽນແປງຂອງຊັບສິນທີ່ຜິດປົກກະຕິຈາກການກວດສອບ;

2.4. ພົບເຫັນຈຸດອ່ອນຂອງ ກຸ່ມເປົ້າໝາຍ ທີ່ຖືກກວດສອບຢ່າງຮອບດ້ານ;

2.5. ພົບເຫັນຄວາມສ່ຽງທີ່ກ່ຽວພັນກັບ ການກວດສອບ ແລະ ກຸ່ມເປົ້າໝາຍເອງ;

2.6. ພົບເຫັນມູນຄ່າຊັບສິນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ບໍ່ພຽງພໍທີ່ຈະຮັບປະກັນ ຕໍ່ກັບຈຳນວນໜີ້ສິນທີ່ຈະຖືກຮ້ອງຟ້ອງໂດຍເຈົ້າໜີ້.

3. ສົ່ງສັນຍາລະຫວ່າງ ບໍລິສັດກວດສອບ ກັບ ກຸ່ມເປົ້າໝາຍ ໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບຊາບ ພ້ອມດຽວກັນນັ້ນໃນສັນຍາສະບັບດັ່ງກ່າວ ຕ້ອງກຳນົດສິດ ແລະ ໜ້າທີ່ຂອງບໍລິສັດກວດສອບ ຫຼື ນັກກວດສອບ ໃນການເປີດເຜີຍຂໍ້ມູນ ແລະ ເອກະສານ ທີ່ຕິດພັນກັບເນື້ອໃນຂອງການກວດສອບ;

4. ດຳເນີນການທົບທວນ ແລະ ກວດສອບບາງລາຍການຄືນໃໝ່ ທີ່ເຫັນວ່າໜ້າສົງໃສ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

5. ຮັບຜິດຊອບຕໍ່ຄວາມເສັຍຫາຍໃຫ້ແກ່ ກຸ່ມເປົ້າໝາຍ ແລະ ຜູ້ນຳໃຊ້ບົດລາຍງານການກວດສອບ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ໃນກໍລະນີທີ່ ວິສາຫະກິດກວດສອບບໍລິສັດກວດສອບ ສ້າງບົດລາຍງານການກວດສອບ ບໍ່ຄົບຖ້ວນ, ບໍ່ຈະແຈ້ງ ແລະ ບໍ່ຖືກຕ້ອງຕາມຄວາມເປັນຈິງ ຊຶ່ງເຮັດໃຫ້ເກີດຄວາມເສັຍຫາຍແກ່ ກຸ່ມເປົ້າໝາຍ ແລະ ຜູ້ນຳໃຊ້ບົດລາຍງານການກວດສອບນັ້ນ;

6. ສົ່ງບົດລາຍງານການເຄື່ອນໄຫວທຸລະກິດ ຊຶ່ງປະກອບດ້ວຍ ເອກະສານລາຍງານການເງິນປະຈຳປີພາຍໃນກຳນົດເວລາ ສາມເດືອນ ຫຼັງຈາກສິ້ນສຸດປີການບັນຊີໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງ

ຫຼັກຊັບ ໂດຍສະເພາະ ໃນໃບລາຍງານຜົນໄດ້ຮັບຕ້ອງແຍກປະເພດລາຍຮັບຂອງ ວິສາຫະກິດ ຢ່າງຈະແຈ້ງບໍ່ວ່າຈະເປັນລາຍຮັບຈາກ ການໃຫ້ການບໍລິການດ້ານບັນຊີ, ການໃຫ້ການບໍລິການກວດສອບ, ທີ່ປຶກສາດານພາສີອາກອນ, ການທົບທວນ ແລະ ການບໍລິການອື່ນໆທີ່ບໍ່ແມ່ນການກວດສອບບັນຊີ;

7. ຮັບປະກັນວ່າ ນັກກວດສອບ ທີ່ໄດ້ຮັບການຮັບຮອງພາຍໃນບໍລິສັດສາມາດປະຕິບັດມາດຕະຖານໃນການກວດສອບບັນຊີ ທີ່ມີການປ່ຽນແປງໃນແຕ່ລະໄລຍະຢ່າງເຂັ້ມງວດ ແລະ ມີການພັດທະນາຄວາມສາມາດດ້ານການກວດສອບໃຫ້ສອດຄ່ອງກັບ ສະພາບການຂະຫຍາຍຕົວໃນແຕ່ລະໄລຍະ;
8. ພັດທະນາບຸກຄະລາກອນໂດຍສະເພາະແມ່ນນັກກວດສອບທີ່ຖືສັນຊາດລາວກ່ຽວກັບ ຮູບແບບ ຫຼື ວິທີການກວດສອບ ໃຫ້ໄດ້ຕາມມາດຕະຖານສາກົນ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວໃນແຕ່ລະໄລຍະ;
9. ຈັດຝຶກອົບຮົມຍົກລະດັບດ້ານວິຊາຊີບໃຫ້ ນັກຊ່ຽວຊານບັນຊີ ແລະ ນັກກວດສອບ ຢ່າງໜ້ອຍ ໜຶ່ງຮ້ອຍຊາວຊົ່ວໂມງ ຕໍ່ສາມປີ ໃນນັ້ນປະກອບດ້ວຍກົດຈັນຍາບັນ ບໍ່ໃຫ້ຫຼຸດ ສີ່ຊົ່ວໂມງ;
10. ຜູ້ທີ່ຈະລົງໄປໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ແຕ່ລະຄັ້ງແມ່ນບໍ່ໃຫ້ຫຼຸດ ສາມທ່ານ ຊຶ່ງຕ້ອງແມ່ນຜູ້ທີ່ມີປະສົບການ, ຄວາມຮູ້ກ່ຽວກັບການເຄື່ອນໄຫວທຸລະກິດຂອງກຸ່ມເປົ້າໝາຍເປັນຢ່າງດີ ແລະ ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ທັງໝົດນັ້ນຕ້ອງປະຕິບັດໜ້າທີ່ຂອງຕົນແຕ່ຕົ້ນຈົນສຳເລັດຮອບດ້ານ ຈຶ່ງສາມາດໄປໃຫ້ບໍລິການດ້ານການບັນຊີ ຫຼື ການກວດສອບ ຕໍ່ກັບກຸ່ມເປົ້າໝາຍອື່ນ. ກໍລະນີ ຖ້າຈະໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ຕໍ່ກັບຫຼາຍກວ່າໜຶ່ງກຸ່ມເປົ້າໝາຍໃນເວລາດຽວກັນ ວິສາຫະກິດ ຕ້ອງຮັບປະກັນວ່າຜູ້ທີ່ຈະລົງໄປໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບນັ້ນ ຕ້ອງບໍ່ຫຼຸດ ສາມທ່ານ ຕໍ່ກັບໜຶ່ງກຸ່ມເປົ້າໝາຍ ແລະ ຕ້ອງແມ່ນຜູ້ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊັ່ນດຽວກັນ. ຍົກເວັ້ນກໍລະນີຈຳເປັນ ຕາມການພິຈາລະນາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມແຕ່ລະກໍລະນີ;
11. ປະຕິບັດຕາມກົດຈັນຍາບັນດ້ານການບັນຊີ ແລະ ການກວດສອບ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງນັກກວດສອບ**

ນັກກວດສອບ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 57 ແລະ ມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

ສິດຂອງນັກກວດສອບ

1. ໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ແກ່ກຸ່ມເປົ້າໝາຍໃຫ້ສອດຄ່ອງກັບເນື້ອໃນທີ່ຕິດພັນກັບການໃຫ້ການບໍລິການຂອງຕົນ ແລະ ສຳເລັດຕາມກຳນົດເວລາ;
2. ພັດທະນາຄວາມຮູ້ທາງດ້ານການບັນຊີ ແລະ ການກວດສອບ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວໃນແຕ່ລະໄລຍະ;
3. ນັກກວດສອບ ຫຼື ຜູ້ຕາງໜ້າຈາກວິສາຫະກິດກວດສອບ ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ປະກອບຄຳເຫັນທີ່ໄດ້ຈາກການກວດສອບ ຫຼື ຕອບຄຳຖາມກ່ຽວກັບການກວດສອບໃນກອງປະຊຸມຜູ້ຖືຮຸ້ນ;
4. ເຂົ້າເຖິງແຫຼ່ງຂໍ້ມູນທີ່ຕິດພັນກັບເນື້ອໃນຂອງການກວດສອບຂອງ ກຸ່ມເປົ້າໝາຍ.

ໜ້າທີ່ຂອງນັກກວດສອບ

1. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການລົງກວດກາ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
2. ລາຍງານມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບກ່ຽວກັບ ໄລຍະເວລາ ແລະ ລາຍລະອຽດ ໃນການໃຫ້ບໍລິການຂອງຕົນ;
3. ຮັກສາຄວາມລັບຕໍ່ກັບບັນດາຂໍ້ມູນ ແລະ ເອກະສານຕ່າງໆ ຂອງກຸ່ມເປົ້າໝາຍ ທີ່ຕົນໄດ້ຮັບຮູ້ ໃນເວລາເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ເວັ້ນເສຍແຕ່ມີຄຳສັ່ງຈາກອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງ;
4. ເຂົ້າຮ່ວມການຝຶກອົບຮົມຍົກລະດັບດ້ານວິຊາຊີບການບັນຊີ ຫຼື ການກວດສອບ ຢ່າງໜ້ອຍ ໜຶ່ງຮ້ອຍຊາວຊົ່ວໂມງ ຕໍ່ ສາມປີ ໃນນັ້ນປະກອບດ້ວຍກົດຈັນຍາບັນບໍ່ໃຫ້ຫຼຸດ ສີ່ຊົ່ວໂມງ;
5. ສຳເນົາໃບຢັ້ງຢືນການເຂົ້າຮ່ວມການຝຶກອົບຮົມ ສົ່ງໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບຊາບ ໂດຍຜ່ານການເຊັນຢັ້ງຢືນຈາກ ພາກສ່ວນທີ່ໃຫ້ການຝຶກອົບຮົມ;
6. ປະຕິບັດພັນທະຕ່າງໆທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດໄວ້ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ;
7. ແຈ້ງໃຫ້ໜ່ວຍງານກວດກາພາຍໃນ, ຄະນະກຳມະການກວດກາພາຍໃນ ແລະ ລາຍງານໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ຫາກພົບເຫັນການລະເມີດຕໍ່ລະບຽບກົດໝາຍທີ່ກ່ຽວຂ້ອງ ຫຼື ກົດລະບຽບຂອງກຸ່ມເປົ້າໝາຍ ທີ່ກ່ຽວຂ້ອງກັບການເຄື່ອນໄຫວທຸລະກິດຂອງກຸ່ມເປົ້າໝາຍ ແລະ ພ້ອມດຽວກັນນັ້ນຕ້ອງລາຍງານໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ເຈັດວັນ ລັດຖະການ ນັບແຕ່ວັນທີພົບເຫັນການລະເມີດ ເປັນຕົ້ນໄປ;
8. ປະຕິບັດຕາມກົດຈັນຍາບັນດ້ານການບັນຊີ ແລະ ການກວດສອບ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

ມາດຕາ 27 ສິດ ແລະ ໜ້າທີ່ຂອງກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 61 ແລະ 62 ແລະ ມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

ສິດຂອງກຸ່ມເປົ້າໝາຍ

1. ເລືອກວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ພັດທະນາບຸກຄະລາກອນພາຍໃນອົງກອນຂອງຕົນໃຫ້ມີຄວາມຮູ້ ແລະ ຄວາມສາມາດ ເປັນຕົ້ນແມ່ນທາງດ້ານການບັນຊີ ແລະ ການກວດສອບ;
3. ພັດທະນາລະບົບການບັນຊີ ແລະ ການລາຍງານໃຫ້ທັນສະໄໝ ແລະ ສອດຄ່ອງກັບຫຼັກການຂອງສາກົນ.

ໜ້າທີ່ຂອງກຸ່ມເປົ້າໝາຍ

1. ລາຍງານໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບກ່ຽວກັບການປະຕິບັດໜ້າທີ່ຂອງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ເມື່ອເຫັນວ່າ ວິສາຫະກິດດັ່ງກ່າວປະຕິບັດ ສິດ ແລະ ໜ້າທີ່ ບໍ່ສອດຄ່ອງກັບລະບຽບກົດໝາຍ ແລະ ຫຼັກການກ່ຽວກັບການບັນຊີ ແລະ ການກວດສອບ;

2. ກະກຽມເອກະສານລາຍງານການເງິນໃຫ້ສອດຄ່ອງກັບ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນຂອງກຸ່ມເປົ້າໝາຍ;
3. ກະກຽມເອກະສານລາຍງານການເງິນໃຫ້ສອດຄ່ອງກັບ ມາດຕະຖານການບັນຊີ ຕາມການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ໃຫ້ຄວາມຮ່ວມມືແກ່ ນັກຊ່ຽວຊານບັນຊີ, ນັກກວດສອບ ໃນການອຳນວຍຄວາມສະດວກທາງດ້ານສະຖານທີ່, ການສະໜອງຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງຢ່າງຄົບຖ້ວນ, ຈະແຈ້ງ, ຖືກຕ້ອງ, ທັນເວລາ ແລະ ສອດຄ່ອງກັບເນື້ອໃນຂອງ ການໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ ໃຫ້ ນັກຊ່ຽວຊານບັນຊີ, ນັກກວດສອບ ໃນເວລາປະຕິບັດວຽກງານຕົວຈິງ;
5. ສະໜອງຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງຢ່າງຄົບຖ້ວນ, ຈະແຈ້ງ, ຖືກຕ້ອງ ແລະ ສອດຄ່ອງກັບເນື້ອໃນຂອງ ການໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
6. ເຊັນຢັ້ງຢືນໃສ່ບົດບັນທຶກ ການໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ ທຸກຄັ້ງ.

## ມາດຕາ 28 ບົດລາຍງານການກວດສອບ

ຄະນະກວດສອບ ແລະ ກຸ່ມເປົ້າໝາຍ ຕ້ອງສ້າງບົດລາຍງານການກວດສອບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 16 ແລະ ຕ້ອງສ້າງ ແລະ ລາຍງານ ເພີ່ມເຕີມ ດັ່ງນີ້:

1. ນັກກວດສອບຕ້ອງສ້າງບົດລາຍງານການກວດສອບ ເພື່ອສະແດງຄຳເຫັນຕໍ່ເອກະສານລາຍງານການເງິນທີ່ໄດ້ຜ່ານການກວດສອບ;
2. ບົດລາຍງານການກວດສອບຕ້ອງມີເນື້ອໃນສອດຄ່ອງກັບຂອບເຂດການກວດສອບ, ຄຳເຫັນຂອງນັກກວດສອບ ແລະ ຂໍ້ມູນທີ່ສຳຄັນ ແລະ ເປັນປະໂຫຍດສຳລັບການຕັດສິນໃຈຂອງຜູ້ນຳໃຊ້ບົດລາຍງານ ເຊັ່ນ: ການບັນທຶກບັນຊີທີ່ຖືກຕ້ອງຕາມມາດຕະຖານທີ່ກຳນົດໄວ້ໃນແຕ່ລະໄລຍະ, ຄາດຄະເນຄວາມເປັນໄປໄດ້ ຫຼື ຊ່ອງຫວ່າງໃນການກະທຳຜິດ, ລະບົບການຄວບຄຸມພາຍໃນ, ຄວາມຖືກຕ້ອງ ແລະ ໂປ່ງໃສ, ອະທິບາຍເຖິງ ລັກສະນະຂອງການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງ, ການນຳໃຊ້ທຶນ ແລະ ຊັບສິນອື່ນໆ;
3. ນັກກວດສອບຕ້ອງກຳນົດກ່ຽວກັບ ຄວາມສ່ຽງໃນການດຳເນີນວຽກງານກວດສອບກຸ່ມເປົ້າໝາຍຢ່າງຮອບດ້ານໃຫ້ຈະແຈ້ງ;
4. ນັກກວດສອບຕ້ອງສົ່ງບົດລາຍງານການກວດສອບໃຫ້ກັບ ກຸ່ມເປົ້າໝາຍ ພາຍໃນກຳນົດເວລາ ສິບສີ່ວັນ ກ່ອນວັນເປີດກອງປະຊຸມຜູ້ຖືຮຸ້ນປະຈຳປີ;
5. ລາຍງານກ່ຽວກັບການເຄື່ອນໄຫວປະຕິບັດວຽກງານຂອງນັກກວດສອບໃນແຕ່ລະໄລຍະ;
6. ບົດລາຍງານການກວດສອບຫາກເປັນພາສາຕ່າງປະເທດຕ້ອງແປເປັນພາສາລາວ.

## ມາດຕາ 29 ການຮັກສາຄວາມລັບ

ນັກຊ່ຽວຊານບັນຊີ, ນັກກວດສອບ ຫຼື ລວມທັງບຸກຄົນອື່ນທີ່ ກ່ຽວຂ້ອງກັບວຽກງານການບັນຊີ ແລະ ການກວດສອບ ຕ້ອງຮັກສາຄວາມລັບກ່ຽວກັບ ຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງຂອງ ກຸ່ມເປົ້າໝາຍ ທີ່ຕິດພັນກັບເນື້ອໃນຂອງ ການໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ທີ່ຕົນໄດ້ຮັບຮູ້ກ່ຽວກັບຂໍ້ມູນ ແລະ ເອກະສານດັ່ງກ່າວ.

## ໝວດທີ 6
## ການໂຈະ ແລະ ການຖອນ ໃບຮັບຮອງ ວິສາຫະກິດບັນຊີ, ວິສາຫະກິດກວດສອບ ນັກຊ່ຽວຊານບັນຊີ ແລະ ນັກກວດສອບ

### ມາດຕາ 30 ການໂຈະໃບຮັບຮອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຈະຖືກໂຈະໃບຮັບຮອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 46 ແລະ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 92 ແລະ ຍັງຈະຖືກໂຈະໃບຮັບຮອງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໄດ້ຮັບການຮັບຮອງບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;
2. ນັກຊ່ຽວຊານບັນຊີ ແລະ ນັກກວດສອບ ຂອງບໍລິສັດດັ່ງກ່າວ ບໍ່ມີຄວາມເປັນອິດສະຫຼະໃນການໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ;
3. ອະນຸຍາດໃຫ້ ນັກຊ່ຽວຊານບັນຊີ ແລະ ນັກກວດສອບ ທີ່ບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມາດຳເນີນການໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບໃຫ້ແກ່ກຸ່ມເປົ້າໝາຍ;
4. ບໍ່ຊຳລະຄ່າທຳນຽມໃນການຕໍ່ອາຍຸໃບຮັບຮອງ ຫຼື ຄ່າຄຸ້ມຄອງປະຈຳປີ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງລະບຽບສະບັບນີ້;
5. ບໍ່ສາມາດປະຕິບັດຕາມ ມາດຕາ 23 ແລະ 25 ຂອງລະບຽບສະບັບນີ້;
6. ຖືກດຳເນີນຄະດີໃດໜຶ່ງ;
7. ມີການປັບປຸງ, ປ່ຽນແປງ ຂໍ້ມູນເພີ່ມເຕີມໃນເອກະສານລາຍງານການເງິນຂອງ ກຸ່ມເປົ້າໝາຍທີ່ໄດ້ກວດສອບໃນປີຜ່ານມາ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;
8. ນະໂຍບາຍຂອງກຸ່ມເປົ້າໝາຍບໍ່ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ;
9. ມີຈຳນວນນັກຊ່ຽວຊານບັນຊີ ແລະ ນັກກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼຸດລົງຕ່ຳກວ່າ ຫ້າຄົນ;
10. ການເຄື່ອນໄຫວທຸລະກິດຂາດທຶນ ສາມປີ ຕິດຕໍ່ກັນ;
11. ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ລະບຽບສະບັບນີ້.

ພາຍຫຼັງຖືກສັ່ງໂຈະ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງປັບປຸງແກ້ໄຂຂໍ້ຜິດພາດໃຫ້ສຳເລັດຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 31 ການໂຈະໃບຮັບຮອງນັກຊ່ຽວຊານບັນຊີ ແລະ ນັກກວດສອບ

ນັກຊ່ຽວຊານບັນຊີ ຈະຖືກໂຈະໃບຮັບຮອງຕາມທີ່ໄດ້ກຳນົດໄວ້ໃນ ລະບຽບຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

ນັກກວດສອບ ຈະຖືກໂຈະໃບຮັບຮອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 55.

ນັກຊ່ຽວຊານບັນຊີ ແລະ ນັກກວດສອບ ຍັງຈະຖືກໂຈະໃບຮັບຮອງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໄດ້ຮັບການຮັບຮອງບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;
2. ບໍ່ຊຳລະຄ່າທຳນຽມໃນການຕໍ່ອາຍຸໃບຮັບຮອງ ແລະ ຄ່າຄຸ້ມຄອງປະຈຳປີ ຕາມເວລາທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງລະບຽບສະບັບນີ້;

3. ບໍ່ໄດ້ເຂົ້າຮ່ວມການຝຶກອົບຮົມຍົກລະດັບດ້ານວິຊາຊີບ ຢ່າງໜ້ອຍ ໜຶ່ງຮ້ອຍຊາວຊົ່ວໂມງຕໍ່ ປີ ໃນນີ້ ປະກອບດ້ວຍກົດຈັນຍາບັນ ບໍ່ໃຫ້ຫຼຸດ ສີ່ຊົ່ວໂມງ;
4. ບໍ່ສາມາດປະຕິບັດຕາມ ມາດຕາ 24 ແລະ 26 ຂອງລະບຽບສະບັບນີ້;
5. ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ລະບຽບສະບັບນີ້.

ພາຍຫຼັງຖືກສັ່ງໂຈະ ນັກຊ່ຽວຊານບັນຊີ ແລະ ນັກກວດສອບ ຕ້ອງປັບປຸງແກ້ໄຂຂໍ້ຜິດພາດໃຫ້ສຳເລັດຕາມກຳນົດເວລາໃນແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ກຳນົດໄວ້.

### ມາດຕາ 32 ການຖອນໃບຮັບຮອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຈະຖືກຖອນໃບຮັບຮອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 47 ແລະ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 93 ແລະ ຍັງຈະຖືກຖອນໃບຮັບຮອງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດກ່ຽວກັບການລົ້ມລະລາຍຂອງວິສາຫະກິດ;
2. ໃນໄລຍະເວລາທີ່ຖືກສັ່ງໂຈະ ຍັງສືບຕໍ່ໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ແກ່ກຸ່ມເປົ້າໝາຍ;
3. ຖືກຖອນໃບອະນຸຍາດໃຫ້ດຳເນີນທຸລະກິດ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບຈາກ ກະຊວງການເງິນ;
4. ມີມະຕິກອງປະຊຸມຜູ້ຖືຮຸ້ນ ຫຼື ຜູ້ມີສິດອຳນາດ ທີ່ກ່ຽວຂ້ອງເຫັນດີຍຸບເລີກກິດຈະການ;
5. ຂໍຖອນໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍຄວາມສະໝັກໃຈ;
6. ບໍ່ຕໍ່ອາຍຸໃບຮັບຮອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງລະບຽບສະບັບນີ້;
7. ບໍ່ສາມາດແກ້ໄຂສາເຫດຂອງການໂຈະຕາມທີ່ກຳນົດໄວ້ໃນ ມາດຕາ 30 ຂອງລະບຽບສະບັບນີ້.

### ມາດຕາ 33 ການຖອນໃບຮັບຮອງນັກຊ່ຽວຊານບັນຊີ ແລະ ນັກກວດສອບ

ນັກຊ່ຽວຊານບັນຊີ ຈະຖືກຖອນໃບຮັບຮອງຕາມທີ່ໄດ້ກຳນົດໄວ້ໃນ ລະບຽບຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

ນັກກວດສອບ ຈະຖືກຖອນໃບຮັບຮອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 56.

ນັກຊ່ຽວຊານບັນຊີ ແລະ ນັກກວດສອບ ຍັງຈະຖືກຖອນໃບຮັບຮອງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຂາດຄວາມສາມາດດ້ານການປະພຶດ, ເສຍຊີວິດ, ຖືກດຳເນີນຄະດີ, ຖືກປົດອອກ, ຖືກຍ້າຍອອກຈາກ ວິສາຫະກິດໜຶ່ງ ໄປສັງກັດຢູ່ອີກ ວິສາຫະກິດໜຶ່ງ ຫຼື ຫົວໜ່ວຍທຸລະກິດອື່ນ, ຖືກປະຕິບັດວິໄນຂັ້ນຮ້າຍແຮງ ຫຼື ມີການລະເມີດລະບຽບກົດໝາຍອື່ນທີ່ກ່ຽວ;
2. ຖືກຖອນໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຫຼື ໃບອະນຸຍາດເປັນນັກກວດສອບຕາມກົດໝາຍຈາກ ກະຊວງການເງິນ;
3. ຂໍຖອນໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍຄວາມສະໝັກໃຈ;
4. ບໍ່ຕໍ່ອາຍຸໃບຮັບຮອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງລະບຽບສະບັບນີ້;
5. ບໍ່ສາມາດແກ້ໄຂສາເຫດຂອງການສັ່ງໂຈະຕາມທີ່ກຳນົດໄວ້ໃນ ມາດຕາ 31 ຂອງລະບຽບສະບັບນີ້.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 34 ຂໍ້ຫ້າມສໍາລັບວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ**

ຂໍ້ຫ້າມສໍາລັບ ວິສາຫະກິດບັນຊີ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 67 ແລະ ມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ວິສາຫະກິດບັນຊີ ເອົາພະນັກງານທີ່ບໍ່ນອນຢູ່ໃນ ບັນຊີລາຍຊື່ທີ່ໄດ້ຜ່ານການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຂອງວິສາຫະກິດຕົນ ມາເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ໃນຂົງເຂດວຽກງານຫຼັກຊັບ;
2. ມີຜົນປະໂຫຍດກ່ຽວຂ້ອງກັບກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການບໍ່ວ່າ ທາງກົງ ຫຼື ທາງອ້ອມ ເປັນຕົ້ນແມ່ນການຮັບ ຫຼື ໃຫ້ສິນບົນ ຕໍ່ກຸ່ມເປົ້າໝາຍ ຫຼື ຮຽກຮ້ອງຜົນປະໂຫຍດອື່ນ ຈາກກຸ່ມເປົ້າໝາຍ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງກັບກຸ່ມເປົ້າໝາຍ ໃນນາມຕົນເອງ ຫຼື ບຸກຄົນອື່ນ ເພື່ອຜົນປະໂຫຍດຕົນເອງ ຫຼື ບຸກຄົນອື່ນ ນອກຈາກຄ່າບໍລິການທີ່ຕິດພັນກັບ ການໃຫ້ການບໍລິການດ້ານການບັນຊີ ທີ່ໄດ້ຕົກລົງກັນໄວ້ກັບລູກຄ້າຂອງຕົນ;
3. ໃຫ້ການບໍລິການກວດສອບແກ່ ກຸ່ມເປົ້າໝາຍ ທີ່ຕົນໃຫ້ການບໍລິການດ້ານການບັນຊີ;
4. ປັບປຸງ, ປ່ຽນແປງຂໍ້ມູນ ແລະ ເອກະສານທີ່ຕິດພັນກັບ ການບັນຊີ ແລະ ລາຍງານການເງິນຂອງກຸ່ມເປົ້າໝາຍ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ;
5. ລະເມີດກົດຈັນຍາບັນດ້ານການບັນຊີ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອໍານາດກ່ຽວຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
6. ປະຕິບັດສິດ ແລະ ໜ້າທີ່ເກີນຂອບເຂດ ທີ່ໄດ້ກໍານົດໄວ້ໃນ ມາດຕາ 23 ຂອງລະບຽບສະບັບນີ້;
7. ສ້າງຄວາມຫຍຸ້ງຍາກໃຫ້ກັບກຸ່ມເປົ້າໝາຍ ຫຼື ເປີດເຜີຍຄວາມລັບຂອງກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດຈາກກຸ່ມເປົ້າໝາຍ ຍົກເວັ້ນ ມີຄໍາສັ່ງຂອງອົງການທີ່ມີສິດອໍານາດທີ່ກ່ຽວຂ້ອງ;
8. ໃຫ້ວິສາຫະກິດບັນຊີ ທີ່ບໍ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມາເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີແທນຕົນ.

ຂໍ້ຫ້າມສໍາລັບ ນັກຊ່ຽວຊານບັນຊີ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 69 ແລະ ມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ມີຜົນປະໂຫຍດກ່ຽວຂ້ອງກັບກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການບໍ່ວ່າ ທາງກົງ ຫຼື ທາງອ້ອມ ເປັນຕົ້ນແມ່ນການຮັບ ຫຼື ໃຫ້ສິນບົນ, ສວຍໃຊ້ຕໍາແໜ່ງ, ໜ້າທີ່, ສິດອໍານາດ ຕໍ່ກຸ່ມເປົ້າໝາຍ ຫຼື ຮຽກຮ້ອງຜົນປະໂຫຍດອື່ນ ຈາກກຸ່ມເປົ້າໝາຍ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງກັບກຸ່ມເປົ້າໝາຍ ໃນນາມຕົນເອງ ຫຼື ບຸກຄົນອື່ນທີ່ຕິດພັນກັບການໃຫ້ການບໍລິການຂອງຕົນ ເພື່ອຜົນປະໂຫຍດຕົນເອງ ຫຼື ບຸກຄົນອື່ນ ນອກຈາກຄ່າບໍລິການທີ່ໄດ້ຕົກລົງກັນໄວ້ກັບລູກຄ້າຂອງຕົນ;
2. ໃຫ້ການບໍລິການກວດສອບແກ່ກຸ່ມເປົ້າໝາຍ ທີ່ຕົນໃຫ້ການບໍລິການດ້ານການບັນຊີ;
3. ສັງກັດຢູ່ ສອງ ວິສາຫະກິດບັນຊີ ຫຼື ຫຼາຍກວ່ານັ້ນ ໃນເວລາດຽວກັນ;
4. ປັບປຸງ, ປ່ຽນແປງຂໍ້ມູນ ແລະ ເອກະສານທີ່ຕິດພັນກັບ ການບັນຊີ ແລະ ລາຍງານການເງິນຂອງກຸ່ມເປົ້າໝາຍ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ;
5. ໃຫ້ບຸກຄົນອື່ນຢືມ ຫຼື ຢືມໃບຢັ້ງຢືນວິຊາຊີບການບັນຊີ ຈາກບຸກຄົນອື່ນ ເພື່ອເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ;

6. ປອມແປງໃບຢັ້ງຢືນນັກວິຊາຊີບການບັນຊີ ແລະ ໃບຮັບຮອງເປັນນັກຊ່ຽວຊານບັນຊີໃນຂົງເຂດວຽກງານຫຼັກຊັບຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
7. ລະເມີດກົດຈັນຍາບັນດ້ານການບັນຊີ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອຳນາດກ່ຽວ ຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
8. ປະຕິບັດສິດ ແລະ ໜ້າທີ່ ເກີນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 24 ຂອງລະບຽບສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
9. ສ້າງຄວາມຫຍຸ້ງຍາກໃຫ້ກັບກຸ່ມເປົ້າໝາຍ ຫຼື ເປີດເຜີຍຄວາມລັບຂອງກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກກຸ່ມເປົ້າໝາຍ ຍົກເວັ້ນ ມີຄຳສັ່ງຂອງອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງ;
10. ໃຫ້ຜູ້ທີ່ບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ການບໍລິການດ້ານການບັນຊີແທນຕົນ.

**ມາດຕາ 35 ຂໍ້ຫ້າມສຳລັບວິສາຫະກິດກວດສອບ ແລະ ນັກກວດສອບ**

ຂໍ້ຫ້າມສຳລັບ ວິສາຫະກິດກວດສອບ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 67 ແລະ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 140 ແລະ ມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ອະນຸຍາດໃຫ້ພະນັກງານທີ່ບໍ່ນອນຢູ່ໃນບັນຊີລາຍຊື່ທີ່ໄດ້ຜ່ານການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂອງວິສາຫະກິດຕົນມາເຄື່ອນໄຫວໃຫ້ການບໍລິການດ້ານການກວດສອບໃນຂົງເຂດວຽກງານຫຼັກຊັບ;
2. ມີຜົນປະໂຫຍດກ່ຽວຂ້ອງກັບກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການບໍ່ວ່າ ທາງກົງ ຫຼື ທາງອ້ອມ ເປັນຕົ້ນແມ່ນການຮັບ ຫຼື ໃຫ້ສິນບົນ ຕໍ່ກຸ່ມເປົ້າໝາຍ ຫຼື ຮຽກຮ້ອງຜົນປະໂຫຍດອື່ນຈາກ ກຸ່ມເປົ້າໝາຍ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງກັບກຸ່ມເປົ້າໝາຍ ໃນນາມຕົນເອງ ຫຼື ບຸກຄົນອື່ນ ເພື່ອຜົນປະໂຫຍດຕົນເອງ ຫຼື ບຸກຄົນອື່ນ ນອກຈາກຄ່າບໍລິການທີ່ໄດ້ຕົກລົງກັນໄວ້ກັບລູກຄ້າຂອງຕົນ;
3. ໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ຕໍ່ກັບກຸ່ມເປົ້າໝາຍດຽວກັນ;
4. ປັບປຸງ, ປ່ຽນແປງຂໍ້ມູນ ແລະ ເອກະສານທີ່ຕິດພັນກັບ ການບັນຊີ ແລະ ລາຍງານການເງິນຂອງກຸ່ມເປົ້າໝາຍ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ;
5. ສົ່ງນັກກວດສອບທີ່ບໍ່ຄົບເງື່ອນໄຂ ລົງໄປໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບ ຕໍ່ກັບກຸ່ມເປົ້າໝາຍ;
6. ລະເມີດກົດຈັນຍາບັນດ້ານການບັນຊີ ແລະ ການກວດສອບ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
7. ປະຕິບັດສິດ ແລະ ໜ້າທີ່ເກີນຂອບເຂດ ທີ່ໄດ້ກຳນົດໄວ້ໃນ ມາດຕາ 25 ຂອງລະບຽບສະບັບນີ້;
8. ສ້າງຄວາມຫຍຸ້ງຍາກໃຫ້ກັບກຸ່ມເປົ້າໝາຍ ຫຼື ເປີດເຜີຍຄວາມລັບຂອງກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກກຸ່ມເປົ້າໝາຍ ຍົກເວັ້ນ ມີຄຳສັ່ງຂອງອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງ;
9. ໃຫ້ບໍລິສັດກວດສອບ ທີ່ບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ການບໍລິການກວດສອບແທນຕົນ.

ຂໍ້ຫ້າມສຳລັບ ນັກກວດສອບ ນອກຈາກຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 68 ແລະ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 140 ແລະ ມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ມີຜົນປະໂຫຍດກ່ຽວຂ້ອງກັບກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການບໍ່ວ່າ ທາງກົງ ຫຼື ທາງອ້ອມ ເປັນຕົ້ນແມ່ນການຮັບ ຫຼື ໃຫ້ສິນບົນ, ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ຕໍ່ກຸ່ມເປົ້າໝາຍ ຫຼື ຮຽກຮ້ອງ

ຜົນປະໂຫຍດອື່ນ ຈາກກຸ່ມເປົ້າໝາຍ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງກັບກຸ່ມເປົ້າໝາຍ ໃນນາມຕົນເອງ ຫຼື ບຸກຄົນອື່ນທີ່ຕິດພັນກັບການໃຫ້ການບໍລິການຂອງຕົນ ເພື່ອຜົນປະໂຫຍດຕົນເອງ ຫຼື ບຸກຄົນອື່ນ ນອກຈາກຄ່າບໍລິການທີ່ໄດ້ຕົກລົງກັນໄວ້ກັບລູກຄ້າຂອງຕົນ;

2. ສັງກັດຢູ່ ສອງ ວິສາຫະກິດບັນຊີ ຫຼື ວິສາຫະກິດກວດສອບ ຫຼື ຫຼາຍກວ່ານັ້ນ ໃນເວລາດຽວກັນ;
3. ປັບປຸງ, ປ່ຽນແປງຂໍ້ມູນ ແລະ ເອກະສານທີ່ຕິດພັນກັບ ການບັນຊີ ແລະ ການກວດສອບ, ລາຍງານການເງິນຂອງກຸ່ມເປົ້າໝາຍ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ;
4. ໃຫ້ບຸກຄົນອື່ນຢືມ ຫຼື ຢືມໃບຢັ້ງຢືນວິຊາຊີບການບັນຊີ ຈາກບຸກຄົນອື່ນ ເພື່ອເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ;
5. ປອມແປງໃບຢັ້ງຢືນນັກວິຊາຊີບການບັນຊີ ແລະ ໃບຮັບຮອງເປັນນັກກວດສອບໃນຂົງເຂດວຽກງານຫຼັກຊັບຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
6. ລະເມີດກົດຈັນຍາບັນດ້ານການບັນຊີ ແລະ ການກວດສອບ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອໍານາດກ່ຽວຂ້ອງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
7. ປະຕິບັດສິດ ແລະ ໜ້າທີ່ໃນການກວດສອບເກີນຂອບເຂດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 26 ຂອງລະບຽບສະບັບນີ້;
10. ສ້າງຄວາມຫຍຸ້ງຍາກໃຫ້ກັບກຸ່ມເປົ້າໝາຍ ຫຼື ເປີດເຜີຍຄວາມລັບຂອງກຸ່ມເປົ້າໝາຍທີ່ຕົນໃຫ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດຈາກກຸ່ມເປົ້າໝາຍ ຍົກເວັ້ນ ມີຄໍາສັ່ງຂອງອົງການທີ່ມີສິດອໍານາດທີ່ກ່ຽວຂ້ອງ;
11. ໃຫ້ຜູ້ທີ່ບໍ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ການບໍລິການດ້ານວຽກງານການບັນຊີ ແລະ ການກວດສອບ ແທນຕົນ.

**ມາດຕາ 36 ຂໍ້ຫ້າມສໍາລັບກຸ່ມເປົ້າໝາຍ**

ຂໍ້ຫ້າມສໍາລັບ ກຸ່ມເປົ້າໝາຍ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 70 ແລະ ມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ ແລະ ເອກະສານທີ່ຕິດພັນກັບເນື້ອໃນຂອງການໃຫ້ການບໍລິການທາງດ້ານການບັນຊີ ແລະ ການກວດສອບ;
2. ລາຍງານ, ສະໜອງຂໍ້ມູນ ແລະ ເອກະສານ ທີ່ຕິດພັນກັບເນື້ອໃນຂອງການໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບບໍ່ທັນຕາມກໍານົດເວລາ, ບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງກັບຄວາມເປັນຈິງ;
3. ຊຸກເຊື່ອງ, ທໍາລາຍຂໍ້ມູນ ແລະ ເອກະສານທີ່ຕິດພັນກັບເນື້ອໃນຂອງການໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ;
4. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ນັກຊ່ຽວຊານບັນຊີ ຫຼື ນັກກວດສອບ;
5. ຊື້ຈ້າງຈອບອອຍ, ໃຫ້ສິນບົນແກ່ ວິສາຫະກິດບັນຊີ, ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ, ນັກກວດສອບ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງ.

## ໝວດທີ 8
## ການຄັດເລືອກ, ແຕ່ງຕັ້ງ, ອາຍຸການໃຫ້ບໍລິການ ແລະ ການຍົກເລີກ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

**ມາດຕາ 37 ການຄັດເລືອກ, ການແຕ່ງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ກຸ່ມເປົ້າໝາຍ ສາມາດຄັດເລືອກ, ແຕ່ງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ດັ່ງນີ້:

1. ຄັດເລືອກຈາກບັນຊີລາຍຊື່ ວິສາຫະກິດບັນຊີ ຫຼື ວິສາຫະກິດກວດສອບ ທີ່ຖືກຮັບຮອງໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ສຳເລັດພາຍໃນກຳນົດເວລາ ເກົ້າສິບວັນ ກ່ອນວັນເລີ່ມຕົ້ນຈັດຕັ້ງປະຕິບັດການໃຫ້ການບໍລິການດ້ານການບັນຊີ, ການທົບທວນ ຫຼື ການກວດສອບ ເປັນຕົ້ນໄປ.
2. ພາຍຫຼັງສຳເລັດການຄັດເລືອກດັ່ງກ່າວ ກຸ່ມເປົ້າໝາຍຕ້ອງແຈ້ງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສາມວັນລັດຖະການ ນັບແຕ່ວັນສຳເລັດການຄັດເລືອກ ເປັນຕົ້ນໄປ;
3. ກຸ່ມເປົ້າໝາຍຕ້ອງແຈ້ງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນກ່ຽວກັບການ ແຕ່ງຕັ້ງ ຫຼື ປ່ຽນແປງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນສຳເລັດການແຕ່ງຕັ້ງ ຫຼື ປ່ຽນແປງເປັນຕົ້ນໄປ ພ້ອມທັງຕ້ອງແຈ້ງໃຫ້ບັນດາຂາຮຸ້ນຮັບຊາບ

**ມາດຕາ 38 ອາຍຸການໃຫ້ການບໍລິການຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສາມາດເຄື່ອນໄຫວໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ໃຫ້ກັບ ກຸ່ມເປົ້າໝາຍໃດໜຶ່ງຕິດຕໍ່ກັນສູງສຸດບໍ່ເກີນ ຫ້າປີ ແລະ ສາມາດໃຫ້ບໍລິການໄດ້ອີກຫຼັງຈາກ ສາມປີ ນັບແຕ່ວັນສິ້ນສຸດການໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ເປັນຕົ້ນໄປ;

ສຳລັບການນັບປີໃຫ້ບໍລິການ ສຳລັບບໍລິສັດທີ່ຈົດທະບຽນໃນປີ 2011 ແມ່ນໃຫ້ເລີ່ມນັບແຕ່ປີທີ່ເຂົ້າຈົດທະບຽນເປັນຕົ້ນໄປ;

ກໍລະນີ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ກຸ່ມເປົ້າໝາຍໃດໜຶ່ງ ບໍ່ເຖິງ ຫ້າປີ ຕິດຕໍ່ກັນ ແລະ ໄດ້ຢຸດໃຫ້ການບໍລິການ ແມ່ນສາມາດໃຫ້ການບໍລິການໄດ້ອີກຫຼັງຈາກ ສອງປີ ນັບແຕ່ວັນຢຸດໃຫ້ການບໍລິການເປັນຕົ້ນໄປ;

ກໍລະນີ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບ ບໍລິສັດໃດໜຶ່ງເພື່ອທີ່ຈະເປັນ ບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ ແມ່ນສາມາດສືບຕໍ່ ໃຫ້ການບໍລິການດ້ານການບັນຊີ ຫຼື ການກວດສອບໄດ້ອີກ ສອງປີ ຕິດຕໍ່ກັນ ຫຼັງຈາກທີ່ບໍລິສັດດັ່ງກ່າວໄດ້ປ່ຽນສະຖານະເປັນ ບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ ແລ້ວ.

**ມາດຕາ 39 ການຍົກເລີກວິສາຫະກິດບັນຊີ ຫຼື ວິສາຫະກິດກວດສອບ**

ກຸ່ມເປົ້າໝາຍສາມາດຍົກເລີກ ວິສາຫະກິດບັນຊີ ຫຼື ວິສາຫະກິດກວດສອບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດສອບອິດສະຫຼະ ມາດຕາ 46 ແລະ 47 ແລະ ສາມາດຍົກເລີກເພີ່ມເຕີມ ດັ່ງນີ້:

1. ນັກຊ່ຽວຊານບັນຊີ ຫຼື ນັກກວດສອບ ມີການກະທຳຜິດ ຫຼື ຂາດປະສິດທິພາບ ໃນການປະຕິບັດໜ້າທີ່ຂອງຕົນ;
2. ນັກຊ່ຽວຊານບັນຊີ ຫຼື ນັກກວດສອບ ຖືກຖອນໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍບໍ່ມີນັກຊ່ຽວຊານບັນຊີ ຫຼື ນັກກວດສອບ ຄົນໃໝ່ປ່ຽນແທນ.

ກຸ່ມເປົ້າໝາຍຕ້ອງແຈ້ງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນກ່ຽວກັບການຍົກເລີກ ວິສາຫະກິດບັນຊີ ຫຼື ວິສາຫະກິດກວດສອບ ພາຍໃນກຳນົດເວລາ ສອງວັນລັດຖະການ ນັບແຕ່ວັນທີ່ມີການຍົກເລີກເປັນຕົ້ນໄປ ພ້ອມທັງຕ້ອງແຈ້ງໃຫ້ບັນດາຂາຮຸ້ນຮັບຊາບ.

## ໝວດທີ 9
## ການຄຸ້ມຄອງ ແລະ ການກວດກາຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

**ມາດຕາ 40 ການຄຸ້ມຄອງ ແລະ ການກວດກາຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສາມາດຕິດຕາມກວດກາບົດລາຍງານການກວດສອບ ເພື່ອຮັບປະກັນໃຫ້ການກວດສອບມີ ປະສິດທິພາບ, ຖືກຕ້ອງ, ຍຸຕິທຳ ແລະ ໂປ່ງໃສ.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດຮຽກຮ້ອງໃຫ້ ວິສາຫະກິດບັນຊີ, ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ, ນັກກວດສອບ, ກຸ່ມເປົ້າໝາຍ ຫຼື ບໍລິສັດທີ່ກ່ຽວຂ້ອງກັບກຸ່ມເປົ້າໝາຍ, ສົ່ງຂໍ້ມູນເອກະສານການສະແດງຄຳເຫັນ, ບົດລາຍງານ ຫຼື ກວດກາປຶ້ມບັນທຶກບັນຊີ ແລະ ເອກະສານອື່ນທີ່ກ່ຽວຂ້ອງ, ກວດສອບການເຄື່ອນໄຫວທຸລະກິດ ແລະ ຖານະທາງການເງິນຂອງກຸ່ມເປົ້າໝາຍ ຫຼື ຂອງບໍລິສັດທີ່ກ່ຽວຂ້ອງກັບກຸ່ມເປົ້າໝາຍ.

ພະນັກງານຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີໜ້າທີ່ດຳເນີນການກວດກາປຶ້ມບັນທຶກບັນຊີ ແລະ ເອກະສານອື່ນທີ່ກ່ຽວຂ້ອງຂອງກຸ່ມເປົ້າໝາຍ ຫຼື ບໍລິສັດທີ່ກ່ຽວຂ້ອງກັບກຸ່ມເປົ້າໝາຍ, ກວດສອບຖານະການເຄື່ອນໄຫວທຸລະກິດ ແລະ ຖານະທາງການເງິນຂອງ ກຸ່ມເປົ້າໝາຍ ຫຼື ບໍລິສັດທີ່ກ່ຽວຂ້ອງກັບກຸ່ມເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ໃນ ວັກສອງ ຂອງມາດຕານີ້ເພື່ອຮັບປະກັນການເຄື່ອນໄຫວວຽກງານດັ່ງກ່າວໃຫ້ມີປະສິດທິພາບ.

**ມາດຕາ 41 ການປະສານສົມທົບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງເປັນເຈົ້າການປະສານສົມທົບກັບສະພາບັນຊີ, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ "LCPA", ກົມບັນຊີກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຕິດຕາມກວດກາການເຄື່ອນໄຫວຂອງ ກຸ່ມເປົ້າໝາຍ, ເມື່ອມີບັນຫາເກີດຂຶ້ນຕ້ອງໄດ້ຮ່ວມກັນຊອກຫາວິທີທາງແກ້ໄຂຕາມລະບຽບກົດໝາຍ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 42 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບລາວ, ວິສາຫະກິດບັນຊີ, ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ, ນັກກວດສອບ, ທີ່ໄດ້ຮັບການຮັບຮອງ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງດ້ານການບັນຊີ ແລະ ການກວດສອບຢູ່ໃນຂົງເຂດວຽກງານຫຼັກຊັບ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການສະເພາະ.

**ມາດຕາ 43 ມາດຕະການຕໍ່ຜູ້ລະເມີດ**

ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ, ຕະຫຼາດຫຼັກຊັບລາວ, ວິສາຫະກິດບັນຊີ, ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ, ນັກກວດສອບ ທີ່ໄດ້ຮັບການຮັບຮອງ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ລະເມີດລະບຽບສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ລັດ, ສັງຄົມ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ

ຫຼື ຮັບຜິດຊອບທາງອາຍາ ຕາມກໍລະນີເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບກົດໝາຍ ທີ່ກ່ຽວຂ້ອງ ແລະ ຈະຖືກປະຕິບັດມາດຕະການເພີ່ມເຕີມ ດັ່ງນີ້:

1. ກໍລະນີທີ່ລະເມີດເປັນຄັ້ງທຳອິດ ແຕ່ມີລັກສະນະເບົາບາງ ຈະຖືກກ່າວເຕືອນຢ່າງເປັນລາຍລັກອັກສອນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ກໍລະນີ ເປັນການລະເມີດຄັ້ງທຳອິດ ແຕ່ມີລັກສະນະຮ້າຍແຮງຈະຖືກກ່າວເຕືອນຢ່າງເປັນ ລາຍລັກອັກສອນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມທັງ ຈະຖືກໂຈະໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ກໍລະນີ ພາຍຫຼັງທີ່ຖືກກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ ແຕ່ຍັງສືບຕໍ່ລະເມີດ ວິສາຫະກິດບັນຊີ ແລະ ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ ແລະ ນັກກວດສອບ ຈະຖືກຖອນໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

### ມາດຕາ 44 ການຈັດຕັ້ງປະຕິບັດ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ກຸ່ມເປົ້າໝາຍ, ວິສາຫະກິດບັນຊີ, ນັກຊ່ຽວຊານບັນຊີ, ວິສາຫະກິດກວດສອບ, ນັກກວດສອບ, ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ລະບຽບສະບັບນີ້ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

### ມາດຕາ 45 ຜົນສັກສິດ

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ, ຂໍ້ກຳນົດ ແລະ ບົດບັນຍັດໃດທີ່ຂັດກັບລະບຽບສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລະບຽບສະບັບນີ້ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍ ລະບຽບການບັນຊີ ແລະ ກວດສອບກ່ຽວກັບວຽກງານຫຼັກຊັບ ສະບັບເລກທີ 013/ຄລຕ, ລົງວັນທີ 10 ພະຈິກ 2010.

**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ**

ດຣ. ບຸນປອນ ບຸດຕະນະວົງ